

# ເຕັກໂນໂລຊີເຄື່ອງພິມ 3D ໄດ້ຮັບການພັດທະນາຢ່າງວ່ອງໄວ ຢູ່ຈີນ

ຕົວເລກຂໍ້ມູນທີ່ກ່ຽວຂ້ອງສະແດງໃຫ້ເຫັນວ່າ: ຈຳນວນຄອບຄົວທີໃຊ້ເຄື່ອງພິມ 3D ຂັ້ນບໍລິໂພກຂອງຈີນ ໄດ້ເພີ່ມຂຶ້ນຈາກບໍ່ເຖິງ 20% ໃນປີ 2023 ເປັນ 45% ໃນປີນີ້. ຖ້າທົ່ວໂລກຂາຍເຄື່ອງພິມ 3D 10 ໜ່ວຍ, ຢ່າງໜ້ອຍຈະມີ 9 ໜ່ວຍຜະລິດຢູ່ນະຄອນເສິນເຈິ້ນແຂວງກວາງຕຸ້ງ ສປ ຈີນ. ການຫັນມາໃຊ້ເຄື່ອງພິມ 3D ກຳລັງປ່ຽນແປງວິຖີຊີວິດປະຈຳວັນຂອງປະຊາຊົນທຳມະດາຢ່າງເປັນກ້າວໆ.

## ເຄື່ອງພິມ 3D ສາມາດພິມເຄື່ອງ 3D ຢູ່ເຮືອນ

"ສ່ຽວເອີ້ຍ, ຜູ້ໃດຮູ້! ຕຸກກະຕາລາປູ້ປູ້ ທີ່ພິມໂດຍເຄື່ອງພິມ 3D, ພຽງແຕ່ຕ້ອງການ 800 ຢວນເທົ່ານັ້ນ, ຍັງງາມກວ່າຕຸກກະຕາທີ່ຊື້ຈາກຮ້ານອີກ!" ຫວ່າງມໍ່ໆມານີ້, ສື່ສັງຄົມອອນລາຍຕ່າງໆຂອງຈີນ, ມີໄວລຸ້ນໄດ້ໂພສຕຸກກະຕາ ແລະ ເຄື່ອງຫຼິ້ນຕ່າງໆທີ່ພິມດ້ວຍເຄື່ອງພິມ 3D ເລື້ອຍໆ, ແຕ່ກ່ອນ, ເຄື່ອງພິມເຫຼົ່ານີ້ເປັນ "ວິທະຍາສາດເຕັກໂນໂລຊີລ້ຳຍຸກ" ໃນຫ້ອງທົດລອງຂອງກຸ່ມຄົນທີ່ມີຄວາມຮູ້ສູງ ຫຼື ມີຄວາມກະຕືລືລົ້ນ ຕໍ່ວິທະຍາສາດເຕັກໂນໂລຊີເທົ່ານັ້ນ, ປັດຈຸບັນ, ກຳລັງໄດ້ຮັບຄວາມນິຍົມຈາກຄົນທັງຫຼາຍ.

ທ້າວ ຈ່າງຊ້ວຍ ທີ່ຮຽນຂະແໜງວິຊາກົນຈັກວິສະວະກຳໄດ້ເຂົ້າໄປຫ້ອງທົດລອງຂອງມະຫາວິທະຍາໄລຕັ້ງແຕ່ເຊົ້າ, ເພື່ອເປີດເຄື່ອງພິມ 3D ຂອງຕົນທີ່ຊື້ມາຫວ່າງບໍ່ດົນແລ້ວຈຶ່ງໄປຂຶ້ນຫ້ອງ. ລາວຈະກັບມາຫ້ອງທົດລອງໃນຕອນກິນເຂົ້າທ່ຽງ ເພື່ອເອົາເຄື່ອງພິມຊິ້ນສ່ວນກົນຈັກທີ່ຕົນອອກແບບ ເພື່ອປະກອບເປັນຜົນງານເຂົ້າຮ່ວມການແຂ່ງຂັນອອກແບບ. ໝູ່ຮ່ວມຫ້ອງຂອງລາວກໍຕ້ອງການພິມເຄື່ອງຕ່າງໆ, ສະນັ້ນ, ທ້າວ ຈ່າງຊ້ວຍ ຍັງໄດ້ຜົນກຳໄລຈາກການພິມຊິ້ນສ່ວນຕ່າງໆໃຫ້ໝູ່ຂອງລາວ.

ທ້າວ ຈ່າງຊ້ວຍ ສັງເກດເຫັນວ່າ: ຢູ່ໃນ "ກຸ່ມຊ່ວຍພິມເຄື່ອງ 3D ເຊິ່ງກັນ ແລະ ກັນສຳລັບຄົນໃໝ່" ທາງວີແຊັດ, ມີເກືອບເຄິ່ງໜຶ່ງໄດ້ຊື້ເຄື່ອງພິມ 3D ເພື່ອໃຊ້ໃນຄອບຄົວ, ສ່ວນຫຼາຍຈະບໍ່ມີຄວາມສາມາດອອກແບບຮູບຈຳລອງ 3D. ລາວຍັງກຽມຈະດາວໂຫຼດຮູບຈຳລອງທາງອອນລາຍ ເພື່ອພິມເປັນເຄື່ອງຫຼິ້ນນ້ອຍ ຫຼື ເຟີນີເຈີນ້ອຍ ເພື່ອຂາຍໃຫ້ລູກຄ້າ.

ທ່ານ ຈ່າງໂປຈື້ ເຈົ້າຂອງຊ່ອງເວັບໄຊ Bilibili ໄດ້ເປີດ "ຊ່ອງທົດລອງຄອບຄົວ" ໃຫ້ລູກຂອງຕົນດ້ວຍເຄື່ອງພິມ 3D ມາໄດ້ຫຼາຍປີແລ້ວ. ໃນຂະນະດຽວກັນ, ລາວຍັງໄດ້ເຜີຍແຜ່ວີດີໂອໃນການນຳໃຊ້ເຄື່ອງພິມ 3D ຈຳນວນໜຶ່ງໃຫ້ແກ່ຄົນອື່ນ.

"ພາຍຫຼັງລູກຂອງຂ້ອຍໄດ້ນຳໃຊ້ເຄື່ອງພິມ 3D ແລ້ວ, ໄດ້ຮຽນຮູ້ວິທະຍາສາດຫຼາຍຢ່າງ ແລະ ໄດ້ແບ່ງປັນຄວາມຮູ້ເຫຼົ່ານີ້ໃຫ້ໝູ່ເພື່ອນຂອງຕົນຢ່າງເປັນເຈົ້າການ. ກໍມີຄວາມຄິດຫຼາຍຢ່າງ ແລະ ດຳເນີນການຄົ້ນຄວ້າ, ສຶກສາຢ່າງເປັນເຈົ້າການ." ທ່ານ ຈ່າງໂປຈື້ ກ່າວວ່າ: ປັດຈຸບັນ, ລູກຫຼ້າຂອງຂ້ອຍກໍມັກອອກແບບ ແລະ ປະກອບຫຸ່ນຍົນຈຳນວນໜຶ່ງດ້ວຍຕົນເອງ, ລູກສາວກໍມັກຮຽນຄອມພິວເຕີ ແລະ ເລີ່ມຮຽນເລື່ອງອອກແບບຮູບຈຳລອງ. ທ່ານເຫັນວ່າ: ເຄື່ອງພິມ 3D ໃຊ້ງົບປະມານບໍ່ຫຼາຍ ແລະ ມີລະດັບເຕັກໂນໂລຊີບໍ່ສູງປານໃດ, ຄົນທັງຫຼາຍໃຊ້ໄດ້ທົ່ວໄປ, ໂດຍສະເພາະແມ່ນສາມາດຊ່ວຍລູກ "ບັນລຸຄວາມຝັນທີ່ຢາກກາຍເປັນນັກວິທະຍາສາດໃນອະນາຄົດ".

ຮູບຈຳລອງ 3D ມີຄວາມອຸດົມສົມບູນທີ່ສຸດ ແມ່ນໄດ້ຮັບຜົນປະໂຫຍດຈາກກຸ່ມຄົນທີ່ໃຊ້ຍີ່ຫໍ້ເຄື່ອງພິມ 3D ທີ່ມີຊື່ສຽງຕ່າງໆ. ປັດຈຸບັນ, ຍີ່ຫໍ້ທີ່ມີຊື່ສຽງລ້ວນແຕ່ໄດ້ສະໜອງຮູບຈຳລອງ 3D ລ້ານກວ່າສະບັບຢູ່ທາງອອນລາຍ. ບໍ່ຕ້ອງສົງໄສເລີຍວ່າ, ນີ້ໄດ້ອຳນວຍຄວາມສະດວກໃຫ້ແກ່ຄອບຄົວ ແລະ ບຸກຄົນທີ່ບໍ່ມີພື້ນຖານໃນການສ້າງຮູບຈຳລອງ 3D. ນອກນີ້, ມີຍີ່ຫໍ້ເຄື່ອງພິມ 3D ຫຼາຍຍີ່ຫໍ້ທີ່ມີຊື່ສຽງ ລ້ວນແຕ່ສະໜັບສະໜູນການສ້າງຮູບຈຳລອງດ້ວຍ AI ເຊິ່ງໄດ້ອຳນວຍຄວາມສະດວກໃຫ້ແກ່ຜູ້ທີ່ຫາກໍ່ໃຊ້ເຄື່ອງພິມ 3D.

ຈາກຄວາມຕ້ອງການນຳໃຊ້ສ່ວນຕົວ ແລະ ການນຳໃຊ້ທາງການຄ້າ, ພາຍໃຕ້ຄວາມນິຍົມທີ່ "ຜະລິດຢູ່ເຮືອນ", ຜູ້ນຳໃຊ້ເຄື່ອງພິມ 3D ໄດ້ນິຍົມກັນໃຊ້ເຄື່ອງພິມ 3D ນັບມື້ນັບຫຼາຍຂຶ້ນ.

## ຈີນໄດ້ນຳພາການຜະລິດເຄື່ອງພິມ 3D ຂອງໂລກ

10 ປີກ່ອນ, ເຄື່ອງພິມ 3D ທຳມະດາເຄື່ອງໜຶ່ງຍັງເປັນ "ວິທະຍາສາດເຕັກໂນໂລຊີລ້ຳຍຸກ" ທີ່ມີລາຄາ 3 ຫາ 4 ໝື່ນຢວນ, ປັດຈຸບັນ, ມີລາຄາພຽງແຕ່ພັນປາຍຢວນເທົ່ານັ້ນ. ຄອບຄົວທຳມະດາກໍນິຍົມກັນຊື້ເຄື່ອງພິມ 3D ນັບມື້ນັບຫຼາຍຂຶ້ນ. ລາຄາຂອງເຄື່ອງພິມ 3D ຖືກກວ່າແຕ່ກ່ອນຫຼາຍ, ຍ້ອນມີ 4 ບໍລິສັດຂອງນະຄອນເສິນເຈິ້ນ ຄື: ບໍລິສັດຊ້ວງສຽງຊານເວີຍ, ບໍລິສັດວິທະຍາສາດເຕັກໂນໂລຊີທົ່ວຈູ, ບໍລິສັດຈິ້ງເວີຍລີຟາງ ແລະ ບໍລິສັດຈື້ເໜີງພາຍ. ປັດຈຸບັນ, ເຄື່ອງພິມ 3D ຂອງ 4 ບໍລິສັດນີ້ໄດ້ກວມ 90% ຂອງຕະຫຼາດ.

ປີ 2014, ຊາວໜຸ່ມ 4 ຄົນທີ່ເກີດໃນຊຸມປີ 1980 ໄດ້ສ້າງຕັ້ງບໍລິສັດຊ້ວງສຽງຊານເວີຍຢູ່ນະຄອນເສິນເຈິ້ນ ແລະ ມີຈຸດປະສົງເຜີຍແຜ່ເຄື່ອງພິມ 3D ໃຫ້ກ້າວເຂົ້າສູ່ຄອບຄົວທຳມະດາ. ປີ 2016, ບໍລິສັດດັ່ງກ່າວໄດ້ຜະລິດເຄື່ອງພິມ 3D ທີ່ມີຄຸນນະພາບດີ ແລະ ລາຄາຖືກ ໄດ້ຮັບຄວາມນິຍົມຊົມຊອບຈາກລູກຄ້າທົ່ວໂລກ. ເຄື່ອງພິມ 3D ເຄື່ອງນີ້ໄດ້ຂາຍຫຼາຍກວ່າໝື່ນເຄື່ອງ. ທ່ານ ເສິນຊຸນ ຜູ້ສ້າງຕັ້ງບໍລິສັດກ່າວວ່າ: ເຄື່ອງພິມ 3D ສາມາດພິມໄດ້ຫຼາຍຢ່າງ ເຊັ່ນ: ແວ່ນຕາ, ເກີບ, ອຸປະກອນການບິນ ແລະ ການບິນອະວະກາດ, ກະດູກມະນຸດ ທີ່ໃຊ້ທາງການແພດ ແລະ ອື່ນໆ.

ລາຄາຂອງເຄື່ອງພິມ 3D ຂອງຈີນໄດ້ຫຼຸດລົງຢ່າງຫຼວງຫຼາຍ, ແມ່ນຍ້ອນປະສິດທິພາບ ທີ່ໂດດເດັ່ນຂອງກຸ່ມອຸດສາຫະກຳການຜະລິດອຸປະກອນແມ່ນຍຳຂອງເຂດສາມຫຼ່ຽມປາກແມ່ນ້ຳຈູ່ຈຽງຂອງຈີນ. ບົດລາຍລາຍຂອງບໍລິສັດໃຫ້ຄຳປຶກສາ CIC ລະບຸວ່າ: ລາຄາຂອງເຄື່ອງພິມ 3D ລະດັບພື້ນຖານຂອງຍີ່ຫໍ້ທີ່ມີຊື່ສຽງຂອງຈີນລົງຮອດປະມານໜຶ່ງພັນຢວນ. ຕ່ອງໂສ້ອຸດສາຫະກຳທີ່ສົມບູນຂອງຈີນເຮັດໃຫ້ການຜະລິດມີຂະໜາດໃຫຍ່ ແລະ ການຍົກລະດັບຢ່າງວ່ອງໄວ (ປະມານ 3 ເດືອນເທື່ອໜຶ່ງ" ສາມາດບັນລຸຄວາມເປັນຈິງ ເຊິ່ງສາມາດບັນລຸການຜະລິດທີ່ມີຄວາມແມ່ນຍຳຄືກັນ ແຕ່ລາຄາຖືກກວ່າ, ແລະລາຄາດຽວກັນ ແຕ່ພັດໃຊ້ໄດ້ດີກວ່າ.

ສິ່ງທີ່ສຳຄັນກວ່າລາຄາແມ່ນ "ການປະຕິວັດເພື່ອໃຊ້ໄດ້ງ່າຍດາຍກວ່າເກົ່າ". ຜູ້ນຳໃຊ້ເຄື່ອງພິມ 3D ໃນໄລຍະຕົ້ນຕ້ອງການມີສີມືປານວິສະວະກອນ ເພື່ອປັບດັດສະນີຕ່າງໆ. ປັດຈຸບັນ, ການປັບຕົວແບບອັດຕະໂນມັດ, ການກວດກາວັດຖຸດິບ, ພິມເຄື່ອງດ້ວຍການກົດປຸ່ມເທື່ອດຽວ, ສ້າງຮູບຈຳລອງອັນມະຫາສານ ແລະ ບົດບາດອື່ນໆ, ໄດ້ເຮັດໃຫ້ການພິມເຄື່ອງ 3D ກາຍເປັນຂັ້ນຕອນທີ່ລຽບງ່າຍ ນັ້ນກໍຄື "ເລືອກຮູບຈຳລອງແລ້ວກົດປຸ່ມພິມເລີຍ". ການນຳໃຊ້ເຕັກໂນໂລຊີໄດ້ດີກວ່າເກົ່າ ແລະ ການປະຕິບັດງານງ່າຍກວ່າເກົ່າ ໄດ້ເຮັດໃຫ້ລູກຄ້າພາກັນຊື້ເຄື່ອງພິມ 3D ເປັນຈຳນວນຫຼວງຫຼາຍ.

ຕົວເລກຂໍ້ມູນສະແດງໃຫ້ເຫັນວ່າ: ຍອດປະລິມານການສົ່ງອອກເຄື່ອງພິມ 3D ໃນປີ 2024 ຂອງຈີນມີເຖິງ 3,7 ລ້ານກວ່າເຄື່ອງ, ໃນນັ້ນ, ຜະລິດຕະພັນສຳລັບລູກຄ້າທົ່ວໄປ ໄດ້ເພີ່ມຂຶ້ນຢ່າງຈະແຈ້ງ. ຕົວເລກຂໍ້ມູນຈາກອົງການສະຖິຕິແຫ່ງຊາດຈີນສະແດງໃຫ້ເຫັນວ່າ: ປະລິມານການຜະລິດເຄື່ອງພິມ 3D ຂອງຈີນໃນ 3 ໄຕມາດຕົ້ນປີນີ້ ໄດ້ເພີ່ມຂຶ້ນ 40,5% ເມື່ອທຽບໃສ່ໄລຍະດຽວກັນຂອງປີກາຍ ແລະ ຈັງຫວະການເຕີບໂຕໄດ້ສູງກວ່າຫຸ່ນຍົນອຸດສາຫະກຳ ແລະ ລົດໃຊ້ພະລັງງານໃໝ່ຢ່າງຫຼວງຫຼາຍ. ນັບລວມແລ້ວ, ເຄື່ອງພິມ 3D ລະດັບພື້ນຖານຂອງ 4 ບໍລິສັດດັ່ງກ່າວຂອງນະຄອນເຊິນເຈິ້ນໄດ້ກວມ 90% ຂອງຕະຫຼາດທົ່ວໂລກ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)




### ເນື້ອໃນເພີ່ມເຕີມ:

ເຕັກໂນໂລຊີພິມເຄື່ອງ 3D ແມ່ນເຕັກໂນໂລຊີຢ່າງໜຶ່ງ ທີ່ຖືເອົາຮູບຈຳລອງດີຈີຕອນ ເປັນພື້ນຖານ ເພື່ອພິມເຄື່ອງ 3D ອອກມາດ້ວຍເຄື່ອງພິມ 3D ດ້ວຍຝຸ່ນໂລຫະ, ຝຸ່ນປລາສະຕິກ ຫຼື ວັດຖຸດິບອື່ນໆ.

ເຄື່ອງພິມ 3D ສາມາດພິມຜະລິດຕະພັນທີ່ມີຮູບນອກທີ່ສັບສົນດ້ວຍຄວາມຖືກຕ້ອງ ແມ່ນຍຳ ເຊິ່ງສາມາດປະຢັດເວລາການຜະລິດ ຜະລິດຕະພັນຕ່າງໆ ແລະ ປະຢັດວັດຖຸດິບໄດ້ດີກວ່າເກົ່າຢ່າງຈະແຈ້ງ.

ເຕັກໂນໂລຊີພິມເຄື່ອງ 3D ແຕ່ກ່ອນເປັນພຽງເຄື່ອງມືໃນການຜະລິດຮູບແບບຕົ້ນສະບັບເທົ່ານັ້ນ, ປັດຈຸບັນ, ໄດ້ກາຍເປັນວິທີການຜະລິດທີ່ມີຄວາມສຳຄັນເປັນຂໍກະແຈໃນຂົງເຂດການບິນ, ການບິນອະວະກາດ, ການແພດ, ລົດຍົນ, ເຄື່ອງບໍລິໂພກ ແລະ ອື່ນໆ.